ນ. ຊູກ ປ. ເລົາ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ເລກທີ.....2034/ກງ

ກະຊວງການເງິນ

ນະຄອນຫຼວງວຽງຈັນ,ວັນທີ.....27 ເມສາ 2021

# ຂໍ້ຕົກລົງ

## ວ່າດ້ວຍການແຕ່ງຕັ້ງຄະນະກຳມະການບໍລິຫານຄວາມສ່ຽງຮ່ວມກັນ

## ສຳລັບໂຄງການທຶນສະໜັບສະໜູນໂຄງການຍ່ອຍເພື່ອຊຸກຍູ້ວຽກງານອຳນວຍຄວາມສະດວກດ້ານການຄ້າ

## (TFA Challenge Facility)

- ອີງຕາມ ບົດບັນທຶກຊ່ວຍຈຳ (Aide Memoire) ທັງສອງສະບັບ ລົງວັນທີ 27 - 31 ພຶດສະພາ 2019 ແລະ ລົງວັນທີ 7-11 ຕຸລາ 2019;
- ອີງຕາມ ບົດບັນທຶກກອງປະຊຸມ ປຶກສາຫາລືລະຫວ່າງໜ່ວຍງານ ຈັດຕັ້ງປະຕິບັດໂຄງການສຳລັບທຶນສະໜັບສະໜູນໂຄງການຍ່ອຍເພື່ອຊຸກຍູ້ວຽກງານອຳນວຍຄວາມສະດວກດ້ານການຄ້າ, ຄັ້ງວັນທີ 10 ກໍລະກົດ 2020 ທີ່ ຫ້ອງປະຊຸມຊັ້ນສອງຂອງກະຊວງອຸດສະຫະກຳ ແລະ ການຄ້າ.
- ອີງຕາມ ດຳລັດວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງການເງິນ, ສະບັບເລກທີ 144/ນຍ, ລົງວັນທີ 08 ພຶດສະພາ 2017.
- ອີງຕາມ ໜັງສືສະເໜີຈາກກົມພາສີ ສະບັບເລກທີ 01425/ກພສ, ລົງວັນທີ 02 ເມສາ 2021.

### ລັດຖະມົນຕີກະຊວງການເງິນ ເຫັນດີຕົກລົງ:

ມາດຕາ 1.ແຕ່ງຕັ້ງ ຄະນະກຳມະການຊີ້ນຳການບໍລິຫານຄວາມສ່ຽງສຳລັບໂຄງການທຶນສະໜັບສະໜູນໂຄງການຍ່ອຍເພື່ອຊຸກຍູ້ວຽກງານອຳນວຍຄວາມສະດວກດ້ານການຄ້າ ຊຶ່ງມີລາຍຊື່ດັ່ງນີ້:

| | | |
|---|---|---|
| 1. | ທ່ານ ພູເຂົາຄຳ ວັນນະວົງໄຊ, ຫົວໜ້າກົມພາສີ | ຫົວໜ້າ |
| 2. | ທ່ານ ວົງຄຳແພງ ວົງທະຈັກ, ຮອງຫົວໜ້າກົມພາສີ | ຮອງຫົວໜ້າ |
| 3. | ທ່ານ ນາງ ວຽງໄຊ ວັນສີລາລົມ, ຮອງຫົວໜ້າກົມອາຫານ ແລະ ຢາ | ຄະນະ |
| 4. | ທ່ານ ສີທອງ ພິພັກຂະວົງ, ຮອງຫົວໜ້າກົມລ້ຽງສັດ ແລະ ການປະມົງ | ຄະນະ |
| 5. | ທ່ານ ປອ ສຸລາພອນ ອິນທະວົງ, ຮອງຫົວໜ້າກົມປູກຝັງ | ຄະນະ |

ມາດຕາ 2.ຄະນະກຳມະການຊີ້ນຳການບໍລິຫານຄວາມສ່ຽງສຳລັບໂຄງການທຶນສະໜັບສະໜູນໂຄງການຍ່ອຍເພື່ອຊຸກຍູ້ວຽກງານອຳນວຍຄວາມສະດວກດ້ານການຄ້າມີໜ້າທີ່ດັ່ງນີ້:

- ຄຸ້ມຄອງການຈັດຕັ້ງປະຕິບັດແຜນຍຸດທະສາດວຽກງານຄຸ້ມຄອງບໍລິຫານຄວາມສ່ຽງ; ໃຫ້ທິດຊີ້ນໍາ ແລະ ວາງແຜນຍຸດທະສາດແກ່ຄວາມສ່ຽງທີ່ເປັນອັນຕະລາຍ; ທົບທວນບົດລາຍງານຄວາມສ່ຽງ ແລະ ວິເຄາະຂັ້ນຕອນບໍລິຫານຄວາມສ່ຽງ ແລະ ການຄຸ້ມຄອງຄວາມສ່ຽງພາຍໃນ; ຮັບຮອງແນວທາງນະໂຍບາຍການຄຸ້ມຄອງຄວາມສ່ຽງ; ກໍານົດທິດທາງເປົ້າໝາຍ; ເຜີຍແຜ່ນະໂຍບາຍວຽກງານບໍລິຫານຄວາມສ່ຽງ; ພັດທະນາຕົວຊີ້ວັດຄວາມສ່ຽງ; ຮັບປະກັນນະໂຍບາຍການຄຸ້ມຄອງຄວາມສ່ຽງທີ່ວາງອອກ; ຮັບປະກັນເຄື່ອງມືໃນການບໍລິຫານຄວາມສ່ຽງແກ່ຜູ້ບໍລິຫານລະດັບກາງ ແລະ ວິຊາການຜູ້ປະຕິບັດງານຕົວຈິງ.
- ສ້າງຄູ່ມືແນະນໍາໃນການຈັດຕັ້ງປະຕິບັດວຽກງານບໍລິຫານຄວາມສ່ຽງໃຫ້ແກ່ໜ່ວຍງານຂອງຕົນທີ່ປະຈໍາຢູ່ດ່ານຢ່າງລະອຽດໂດຍສະເພາະມາດຕະຖານການດໍາເນີນງານ SOP
- ເຊັນບົດບັນທຶກຄວາມເຂົ້າໃຈ MOU ຮ່ວມກັນຢ່າງເປັນທາງການກ່ຽວກັບການຈັດຕັ້ງປະຕິບັດວຽກງານບໍລິຫານຄວາມສ່ຽງ, ການກວດສອບຄືນພາຍຫຼັງການນໍາເຂົ້າ ແລະ ມາດຕະການອື່ນໆທີ່ນອນໃນສັນຍາ WTO-TFA

**ມາດຕາ 3.** ແຕ່ງຕັ້ງຄະນະປະສານງານວຽກງານບໍລິຫານຄວາມສ່ຽງບັນດາກົມ

| | | |
|---|---|---|
| 1. | ທ່ານ ນາງ ທິບມະນີ ແກ້ວບຸນພັນ, ຮອງຫົວໜ້າພະແນກ, ກົມພາສີ | ຫົວໜ້າ |
| 2. | ທ່ານ ສຸກສົມຄອນ ຈັນທະມາດ, ຫົວໜ້າພະແນກບໍລິຫານ, ກົມອາຫານ ແລະ ຢາ | ຮອງຫົວໜ້າ |
| 3. | ທ່ານ ສຸລິຍະສັກ ໃຈຍະວົງ, ຫົວໜ້າພະແນກສັດຕະວະແພດ, ກົມລ້ຽງສັດ ແລະ ການປະມົງ | ຮອງຫົວໜ້າ |
| 4. | ທ່ານ ນາງ ທັດສະນະລີ ສະພັງທອງ, ຮັກສາການຫົວໜ້າພະແນກກັກກັນພືດ, ກົມປູກຝັງ | ຮອງຫົວໜ້າ |
| 5. | ທ່ານ ນາງ ສຸກປະເສີດ ນະລີໂດດ, ຮສກ ຫົວໜ້າຂະແໜງກວດສອບຄືນ ແລະ ບໍລິການຄວາມສ່ຽງ ກົມພາສີ | ຄະນະ |
| 6. | ທ່ານ ນາງ ບົວຈັນ ທໍາມະລັດ, ຮອງຫົວໜ້າພະແນກລະບຽບການ, ກົມປູກຝັງ | ຄະນະ |
| 7. | ທ່ານ ນາງ ພອນສະຫວັນ ພອນປະເສີດ, ຮອງຫົວໜ້າພະແນກລະບຽບການ, ກົມລ້ຽງສັດ ແລະ ການປະມົງ | ຄະນະ |
| 8. | ທ່ານ ນາງ ວຽງມະນີ ລໍເປູຍຍາວ, ຮອງຫົວໜ້າພະແນກເຄມີ, ຢາເສບຕິດ ແລະ ເຄື່ອງສໍາອາງ | ຄະນະ |

**ມາດຕາ 4.** ໜ້າທີ່ຮັບຜິດຊອບຂອງຄະນະປະສານງານວຽກງານບໍລິຫານຄວາມສ່ຽງບັນດາກົມ

- ເປັນສູນກາງໃນການຮັບຜິດຊອບເກັບກໍາຂໍ້ມູນຄວາມສ່ຽງທັງໝົດເພື່ອນໍາມາວິເຄາະ, ວິໃຈ, ຈັດລະດັບຄວາມສ່ຽງ ແລະ ພັດທະນາປັບປຸງຂໍ້ມູນເພື່ອປ້ອນເຂົ້າໃນລະບົບ ອາຊີກູດາ ເຊິ່ງເປັນລະບົບການແຈ້ງພາສີທັນສະໄໝ.
- ສະໜອງຂໍ້ມູນຄວາມສ່ຽງຂອງຂະແໜງການຕົນໃຫ້ແກ່ກົມພາສີເພື່ອສັງລວມ ເພື່ອປ້ອນເຂົ້າໃນລະບົບອາຊີກູດາ ຕາມຂັ້ນຕອນ ແລະ ໃຫ້ເຈົ້າໜ້າທີ່ຕາມດ່ານຊາຍແດນໄດ້ນໍາໃຊ້
- ປະສານສົມທົບກັບລະຫວ່າງຄະນະກໍາມະການຄຸ້ມຄອງຄວາມສ່ຽງ ໃນການ ຄົ້ນຄ້ວາ ແລະ ປະເມີນບັນດາ ສິນຄ້າຊາຍແດນທີ່ມີຄວາມສ່ຽງສູງ ເພື່ອດໍາເນີນການຕິດຕາມ ແລະ ກວດກາ ໃຫ້ມີປະສິດທິພາບ ແລະ ປະສິດທິຜົນ.
- ໃຫ້ຄໍາແນະນໍາກ່ຽວກັບກົນໄກການດໍາເນີນງານວຽກງານ ບໍລິຫານຄວາມສ່ຽງຕໍ່ພາກສ່ວນເຈົ້າໜ້າທີ່ກ່ຽວຂ້ອງ ທີ່ຢູ່ດ່ານ
- ເປັນເຈົ້າການຈັດກອງປະຊຸມ, ເຂົ້າຮ່ວມກອງປະຊຸມພາຍໃນ ແລະ ສາກົນ ປັບປຸງວຽກງານບໍລິຫານຄວາມສ່ຽງລວມໃຫ້ມີປະສິດທິຜົນ
- ປະສານ-ສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ຈັດກອງປະຊຸມວິຊາການເພື່ອແລກປ່ຽນບົດຮຽນກ່ຽວກັບລະບຽບການສາກົນ ເພື່ອຄົ້ນຄວ້າ ແລະ ກະກຽມຂັ້ນຕອນໃນການປັບປຸງວຽກງານບໍລິຫານຄວາມສ່ຽງໃຫ້ມີປະສິດທິພາບ

- ລົງເກັບກຳຂໍ້ມູນບໍລິຫານຄວາມສ່ຽງຢູ່ບັນດາດ່ານຊາຍແດນ ເພື່ອເປັນບ່ອນອີງໃນການສັງລວມ ແລະ ຕັ້ງຄ່າຄວາມສ່ຽງ ໃສ່ໃນລະບົບອາຊີກູດາ ເພື່ອດຳເນີນການວິເຄາະຂອງການແຈ້ງພາສີເປັນລາຍລະອຽດແຕ່ລະລະດັບໃຫ້ສອດຄ່ອງ ແລະ ແທດເໝາະກັບສະພາບການເຄື່ອນໄຫວໃນປະຈຸບັນ
- ຈັດສຳມະນາ ແລະ ຝຶກອົບຮົມເຜີຍແຜ່ວຽກງານບໍລິຫານຄວາມສ່ຽງຊາຍແດນໃນຂອບເຂດທົ່ວປະເທດທີ່ນຳໃຊ້ລະບົບແຈ້ງພາສີແບບອີເລັກໂຕນິກ
- ສັງລວມລາຍງານຢ່າງເປັນປະຈຳກ່ຽວກັບຄວາມຄືບໜ້າ ແລະ ຕີລາຄາຜົນການປັບປຸງວຽກງານບໍລິຫານຄວາມສ່ຽງ ເພື່ອຂໍທິດຊີ້ນຳຈາກແກ່ຄະນະຊີ້ນຳລວມ

**ມາດຕາ 5.** ບັນດາທ່ານທີ່ຖືກແຕ່ງຕັ້ງ ແລະ ພາກສ່ວນທີ່ກ່ຽວຂ້ອງ ຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດ ຂໍ້ຕົກລົງສະບັບນີ້ໃຫ້ໄດ້ຮັບຜົນສຳເລັດເປັນຢ່າງດີ.

**ມາດຕາ 6.** ຂໍ້ຕົກລົງສະບັບນີ້ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

**ລັດຖະມົນຕີກະຊວງການເງິນ**

ບຸນໂຈມ ອຸບົນປະເສີດ